**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເລກທີ 0182 /ສວປ
ນະຄອນຫຼວງວຽງຈັນ, ວັນທີ 11 OCT 2019

# ບົດແນະນຳ
## ການຈັດຕັ້ງປະຕິບັດການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ໄລຍະຂ້າມຜ່ານຮອດປີ 2020 ໂດຍບໍ່ໄດ້ສອບເສັງລະດັບຊາດ

ໂດຍປະຕິບັດຕາມ ມາດຕາ 11 ຂອງຂໍ້ຕົກລົງວ່າດ້ວຍການອອກໃບອະນຸຍາດປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນສຳລັບຜູ້ປະກອບວິຊາຊີບປິ່ນປົວ ໃນ ສປປ ລາວ ສະບັບເລກທີ 1307/ສທ, ລົງວັນທີ 30 ມິຖຸນາ 2017 ວ່າດ້ວຍການກະກຽມໃນໄລຍະຂ້າມຜ່ານ.

**ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ອອກບົດແນະນຳ:**

**1. ຈຸດປະສົງ**

ບົດແນະນຳສະບັບນີ້ ແມ່ນເພື່ອຜັນຂະຫຍາຍເນື້ອໃນ ມາດຕາ 11 ຂອງຂໍ້ຕົກລົງວ່າດ້ວຍການອອກໃບອະນຸຍາດປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນສຳລັບຜູ້ປະກອບວິຊາຊີບປິ່ນປົວ ໃນ ສປປ ລາວ ສະບັບເລກທີ 1307/ສທ, ລົງວັນທີ 30 ມິຖຸນາ 2017 ໃຫ້ເປັນອັນລະອຽດ, ຊັດເຈນ, ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດຕົວຈິງ ໃຫ້ສອດຄ່ອງກັບແຜນຍຸດທະສາດການປະຕິຮູບສາທາລະນະສຸກ, ຖືກຕ້ອງຕາມລະບຽບຫຼັກການ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**2. ນິຍາມ**

ການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວໄລຍະຂ້າມຜ່ານ ແມ່ນ ການຂຶ້ນທະບຽນ ແລະ ອອກໃບອະນຸຍາດໃຫ້ແກ່ຜູ້ປະກອບວິຊາຊີບປິ່ນປົວທີ່ໄດ້ເຮັດວຽກມາກ່ອນປີ 2020 ເພື່ອໃຫ້ສາມາດເຄື່ອນໄຫວວິຊາຊີບຂອງຕົນໄດ້ຢ່າງຖືກຕ້ອງຕາມລະບຽບກົດໝາຍ ໂດຍບໍ່ຜ່ານການສອບເສັງລະດັບຊາດ. ໃບອະນຸຍາດດັ່ງກ່າວມີອາຍຸ ຫ້າ ປີ ແລະ ຖ້າຕ້ອງການຈະຕໍ່ອາຍຸ ແມ່ນຕ້ອງມີຄະແນນສະສົມ ຂອງຂະບວນການພັດທະນາວິຊາຊີບຕໍ່ເນື່ອງ ທີ່ສະພາຄຸ້ມຄອງວິຊາຊີບປິ່ນປົວ(ສວປ) ກຳນົດອອກ.

## 3. ການອະທິບາຍຄຳສັບ

ຄຳສັບຕ່າງໆທີ່ນຳໃຊ້ໃນບົດແນະນຳສະບັບນີ້ ມີຄວາມໝາຍ ດັ່ງນີ້:

3.1. **ໄລຍະຂ້າມຜ່ານ**: ໝາຍເຖິງ ແຕ່ນີ້ຮອດໝົດປີ 2020 ເຊິ່ງແມ່ນໄລຍະການກະກຽມ ແລະ ປະຕິບັດການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ໃຫ້ບັນດາຜູ້ປະກອບວິຊາຊີບປິ່ນປົວ ທີ່ກຳລັງປະຕິບັດວຽກງານປິ່ນປົວມາແລ້ວ ກ່ອນປີ 2020;

3.2. **ການຂຶ້ນທະບຽນ**: ໝາຍເຖິງ ການບັນທຶກຂໍ້ມູນຄົບຖ້ວນຂອງຜູ້ປະກອບວິຊາຊີບປິ່ນປົວທີ່ໄດ້ຮັບໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ເຂົ້າໃນຖານຂໍ້ມູນຂອງ ສວປ;

3.3. **ການພັດທະນາວິຊາຊີບຕໍ່ເນື່ອງ**: ໝາຍເຖິງ ການສົ່ງເສີມ, ການພັດທະນາຄວາມຮູ້ ແລະ ທັກສະໃນວິຊາຊີບຂອງຕົນ ຢ່າງຕໍ່ເນື່ອງ ໂດຍຜ່ານກິດຈະກຳຕ່າງໆ ຂອງຜູ້ປະກອບວິຊາຊີບປິ່ນປົວ ເຊັ່ນ: ການຍົກລະດັບຄວາມຮູ້ ທັງໄລຍະສັ້ນ ແລະ ຍາວ, ການເຂົ້າຮ່ວມຝຶກອົບຮົມ, ການສຳມະນາ, ການປະຊຸມວິຊາການ, ການສິດສອນທາງດ້ານທິດສະດີ ແລະ ພາກປະຕິບັດຕົວຈິງ, ການຄົ້ນຄວ້າວິທະຍາສາດ, ການບໍລິການ, ການປະກອບສ່ວນໃຫ້ສັງຄົມ, ການຮຽນຮູ້ດ້ວຍຕົນເອງ ແລະ ອື່ນໆ ຕາມການກຳນົດຂອງ ສວປ.

## 4. ຂອບເຂດການນຳໃຊ້

ບົດແນະນຳສະບັບນີ້ ນຳໃຊ້ສຳລັບຜູ້ປະກອບວິຊາຊີບປິ່ນປົວທີ່ກຳລັງປະຕິບັດວຽກງານປິ່ນປົວຢູ່ໃນ ສປປ ລາວ ທັງພາກລັດ ແລະ ເອກະຊົນ ມາແລ້ວ ກ່ອນປີ 2020 ແລະ ເປັນບ່ອນອີງໃຫ້ແກ່ຜູ້ປະກອບວິຊາຊີບປິ່ນປົວຄົນລາວ ທີ່ມີຈຸດປະສົງຢາກໄປເຄື່ອນໄຫວວິຊາຊີບປິ່ນປົວ ຢູ່ຕ່າງປະເທດ ຫຼື ຜູ້ປະກອບວິຊາຊີບປິ່ນປົວຄົນຕ່າງປະເທດ ທີ່ມີຈຸດປະສົງຢາກມາເຄື່ອນໄຫວວິຊາຊີບປິ່ນປົວ ຢູ່ ສປປ ລາວ.

## 5. ກຸ່ມເປົ້າໝາຍ

5.1. ທ່ານໝໍ ລະດັບປະລິນຍາຕີ ຂຶ້ນໄປ;

5.2. ທັນຕະແພດ ລະດັບປະລິນຍາຕີ ຂຶ້ນໄປ;

5.3. ພະຍາບານ ແລະ ຜະດຸງຄັນ ລະດັບຊັ້ນສູງ ແລະ ປະລິນຍາຕີ ຂຶ້ນໄປ.
ສຳລັບຜູ້ປະກອບວິຊາຊີບປິ່ນປົວ ລະດັບລຸ່ມປະລິນຍາຕີລົງມາ ຈະມີລະບຽບການສະເພາະ.

## 6. ເງື່ອນໄຂ

6.1. ທ່ານໝໍ, ທັນຕະແພດ, ພະຍາບານ ແລະ ຜະດຸງຄັນ ລວມທັງ ຜູ້ທີ່ເປັນອາສາສະໝັກ, ຈ້າງຕາມສັນຍາ ທີ່ກຳລັງເຮັດວຽກໃຫ້ການບໍລິການປິ່ນປົວຢູ່ສະຖານທີ່ບໍລິການປິ່ນປົວ ທັງພາກລັດ ແລະ ເອກະຊົນ ຕິດຕໍ່ກັນ ສອງ ປີ ຂຶ້ນໄປ ສຳລັບທ່ານໝໍ ແລະ ທັນຕະແພດ; ໜຶ່ງ ປີ ຂຶ້ນໄປ ສຳລັບພະຍາບານ ແລະ ຜະດຸງຄັນ;

6.2. ທ່ານໝໍ, ທັນຕະແພດ, ພະຍາບານ ແລະ ຜະດຸງຄັນ ຜູ້ທີ່ໄດ້ຮັບບຳເນັດ ແລະ ບຳນານ ທີ່ມີປະສົບການເຮັດວຽກໃຫ້ການບໍລິການປິ່ນປົວຢູ່ສະຖານທີ່ບໍລິການປິ່ນປົວ ທັງພາກລັດ ແລະ ເອກະຊົນ ທີ່ຢາກສືບຕໍ່ເຮັດວຽກໃຫ້ການບໍລິການປິ່ນປົວ;

6.3. ທ່ານໝໍ, ທັນຕະແພດ, ພະຍາບານ ແລະ ຜະດຸງຄັນ ທີ່ກຳລັງເຮັດວຽກບໍລິຫານຄຸ້ມຄອງໃນປະຈຸບັນ ທີ່ມີປະສົບການເຮັດວຽກໃຫ້ການບໍລິການປິ່ນປົວມາກ່ອນ ຫ້າ ປີ ຕິດຕໍ່ກັນຂຶ້ນໄປ ສຳລັບທ່ານໝໍ ແລະ ທັນຕະແພດ; ສາມ ປີ ຂຶ້ນໄປສຳລັບພະຍາບານ ແລະ ຜະດຸງຄັນ, ຖ້າຢາກກັບມາເຮັດວຽກການປິ່ນປົວ;

6.4. ທ່ານໝໍ, ທັນຕະແພດ, ພະຍາບານ ແລະ ຜະດຸງຄັນ ທີ່ເປັນລັດຖະກອນ ແຕ່ບໍ່ເຄີຍເຮັດວຽກໃຫ້ການບໍລິການປິ່ນປົວມາກ່ອນ ຕ້ອງໄດ້ໄປເຮັດວຽກໃຫ້ການບໍລິການປິ່ນປົວ ຢູ່ ໂຮງໝໍສິດສອນ ຂັ້ນສູນກາງ ຫຼື ແຂວງ ສອງ ປີ ຕິດຕໍ່ກັນ ສຳລັບທ່ານໝໍ ແລະ ທັນຕະແພດ; ໜຶ່ງ ປີ ສຳລັບພະຍາບານ ແລະ ຜະດຸງຄັນ;

6.5. ທ່ານໝໍ, ທັນຕະແພດ ທີ່ເປັນອາສາສະໝັກ, ຈ້າງຕາມສັນຍາທີ່ເຮັດວຽກໃຫ້ການບໍລິການປິ່ນປົວ ໄລຍະເວລາຕໍ່າກ່ວາ ສອງ ປີ; ສ່ວນພະຍາບານ ແລະ ຜະດຸງຄັນ ຕໍ່າກ່ວາ ໜຶ່ງ ປີ ຈະໄດ້ຮັບໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວເບື້ອງຕົ້ນ ແລະ ຕ້ອງໄດ້ໄປເຮັດວຽກໃຫ້ການບໍລິການປິ່ນປົວ ຕາມສາຂາວິຊາຊີບຂອງຕົນ ພາຍໃຕ້ການຊີ້ນຳຂອງທ່ານໝໍອາວຸໂສ ໃຫ້ຄົບຕາມກຳນົດ.

**7. ຂັ້ນຕອນການຈັດຕັ້ງປະຕິບັດການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວໃນໄລຍະຂ້າມຜ່ານ**

7.1. ສະພາຄຸ້ມຄອງວິຊາຊີບປິ່ນປົວ ຈະໄດ້ເຜີຍແຜ່ບົດແນະນຳສະບັບນີ້ ແລະ ອອກແຈ້ງການເຖິງສະຖານທີ່ບໍລິການປິ່ນປົວ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ;

7.2. ສະຖານທີ່ບໍລິການປິ່ນປົວແຕ່ລະແຫ່ງທີ່ມີເງື່ອນໄຂ ຕ້ອງໄດ້ແຕ່ງຕັ້ງຄະນະກຳມະການສະເພາະກິດ ເພື່ອຮັບຜິດຊອບ ຮັບ ແລະ ກວດກາ ເອກກະສານ ໃຫ້ຄົບຖ້ວນ ແລະ ຄັດແຍກ ເປັນໝວດວິຊາຊີບ;

7.3. ກຸ່ມເປົ້າໝາຍ ປະກອບເອກກະສານ ຕາມເອກກະສານຊ້ອນທ້າຍ 1, ແລ້ວຍື່ນຜ່ານການຈັດຕັ້ງຂອງສະຖານທີ່ບໍລິການປິ່ນປົວທີ່ຕົນສັງກັດ;

7.4. ຄະນະກຳມະການສະເພາະກິດ ຂອງສະຖານທີ່ບໍລິການປິ່ນປົວ ຈັດກອງປະຊຸມຄົ້ນຄວ້າເອກກະສານເປັນລາຍບຸກຄົນ, ຢັ້ງຢືນຄວາມຖືກຕ້ອງ, ເໝາະສົມ ຂອງຜູ້ມີເງື່ອນໄຂ ທີ່ຈະໄດ້ຮັບໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ຕາມຂໍ້ແນະນຳທີ່ລະບຸໄວ້ໃນເອກກະສານຊ້ອນທ້າຍ 4, ແລ້ວຈັດເປັນບັນຊີລາຍຊື່ ພ້ອມດ້ວຍເອກກະສານຄົບຖ້ວນ ຍື່ນຜ່ານການຈັດຕັ້ງຂັ້ນເທິງຂອງຕົນຕາມລຳດັບ (ຕົວຢ່າງ: ສຸກສາລາ ຫຼື ໂຮງໝໍນ້ອຍ ແລະ ໂຮງໝໍເມືອງ ຫຼື ໂຮງໝໍຊຸມຊົນ, ຫ້ອງການສາທາລະນະສຸກເມືອງ, ໂຮງໝໍແຂວງ ແລະ ພະແນກສາທາລະນະສຸກແຂວງ) ເພື່ອເຊັນຮັບຮູ້ ແລ້ວສົ່ງຕໍ່ໃຫ້ຫ້ອງການ ສວປ; ສຳລັບໂຮງໝໍ ແລະ ສູນປິ່ນປົວຂັ້ນສູນກາງ ໃຫ້ຍື່ນຜ່ານຄະນະກຳມະການສະເພາະກິດ ແລະ ການຈັດຕັ້ງຂອງໂຮງໝໍ ແລະ ສູນປິ່ນປົວ ເຊັນຮັບຮອງ ແລ້ວສົ່ງຕໍ່ໃຫ້ຫ້ອງການ ສວປ;

7.5. ສະພາຄຸ້ມຄອງວິຊາຊີບປິ່ນປົວ ຈະໄດ້ດຳເນີນການທົດລອງຈັດຕັ້ງປະຕິບັດການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວໃນໄລຍະຂ້າມຜ່ານນີ້ ຢູ່ສະຖານທີ່ບໍລິການປິ່ນປົວທີ່ມີຄວາມພ້ອມ ເພື່ອຖອດຖອນບົດຮຽນ;

7.6. ໄລຍະເວລາຈັດຕັ້ງປະຕິບັດ ແມ່ນຈະເລີ່ມໃນໄຕມາດທີ ສາມ ຂອງປີ 2019 ຫາ ໄຕມາດທີ ສີ່ ຂອງປີ 2020;

7.7. ສະພາຄຸ້ມຄອງວິຊາຊີບປິ່ນປົວຈຳເປັນຕ້ອງໄດ້ກຽມຄວາມພ້ອມທຸກດ້ານ ເພື່ອຮອງຮັບການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວໃນໄລຍະຂ້າມຜ່ານ.

## 8. ຂັ້ນຕອນການພິຈາລະນາການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ

8.1. ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ ຄັດແຍກ ແລະ ຈັດສົ່ງ ເອກະສານໃຫ້ແຕ່ລະຄະນະກຳມະການວິຊາຊີບປິ່ນປົວ(ບອດ ,Board);

8.2. ແຕ່ລະບອດ ມີໜ້າທີ່ຄົ້ນຄວ້າ, ກວດກາ, ພິຈາລະນາ, ຢັ້ງຢືນຄວາມຖືກຕ້ອງ ແລະ ເໝາະສົມ, ແລ້ວນຳສົ່ງຄືນໃຫ້ຫ້ອງການ ສວປ ເພື່ອສະເໜີໃຫ້ທ່ານປະທານ ສວປ ຮັບຮອງ;

8.3. ເມື່ອຖືກຮັບຮອງແລ້ວ, ຫ້ອງການ ສວປ ຕ້ອງໄດ້ດຳເນີນຂັ້ນຕອນການຂຶ້ນທະບຽນບຸກຄົນ ໃຫ້ເປັນຜູ້ປະກອບວິຊາຊີບປິ່ນປົວຢ່າງຖືກຕ້ອງຕາມກົດໝາຍ ແລະ ຈັດຕຽມໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວໃຫ້ທ່ານປະທານເຊັນຮັບຮອງ.

## 9. ກົນໄກສຳລັບຜູ້ປະກອບວິຊາຊີບປິ່ນປົວຄົນຕ່າງປະເທດ

9.1. ໃນໄລຍະຂ້າມຜ່ານນີ້ ສວປ ຈະໄດ້ພິຈາລະນາ ແຕ່ການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວຊົ່ວຄາວ (Temporary license) ເທົ່ານັ້ນ.

9.2. ເງື່ອນໄຂການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວໃຫ້ ທ່ານໝໍ, ທັນຕະແພດ, ພະຍາບານ ແລະ ຜະດຸງຄັນ ທີ່ເປັນຄົນຕ່າງປະເທດ ລວມທັງປະເທດອາຊຽນ, ມີດັ່ງນີ້:

1) ຮຽນຈົບວິຊາຊີບການແພດ, ທັນຕະແພດ, ລະດັບປະລິນຍາຕີ ຂຶ້ນໄປ; ພະຍາບານ ແລະ ຜະດຸງຄັນ ລະດັບຊັ້ນສູງຂຶ້ນໄປ ຈາກສະຖາບັນການສຶກສາ ສາຂາລະບະສຸກ ທີ່ຖືກຮັບຮູ້ໂດຍການຈັດຕັ້ງທີ່ກ່ຽວຂ້ອງ ຂອງປະເທດທີ່ສະຖາບັນການສຶກສາ ສາທາລະນະສຸກນັ້ນສັງກັດຢູ່;
2) ມີໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວຂອງປະເທດຕົນເອງ (ປະເທດຕົ້ນທາງ) ທີ່ນຳໃຊ້ໄດ້ ຢ່າງໜ້ອຍ 6 ເດືອນ ກ່ອນໝົດກຳນົດເຮັດວຽກ ໃນ ສປປ ລາວ;
3) ມີປະສົບການເຮັດວຽກໃຫ້ການບໍລິການປິ່ນປົວຢູ່ປະເທດຕົ້ນທາງ ຕິດຕໍ່ກັນ ຫ້າ ປີ ສຳລັບທ່ານໝໍ ແລະ ທັນຕະແພດ; ສາມ ປີ ສຳລັບພະຍາບານ ແລະ ຜະດຸງຄັນ;
4) ມີໃບຢັ້ງຢືນຮັບເອົາມາເຮັດວຽກຈາກການຈັດຕັ້ງ ຫຼື ສະຖານທີ່ ທີ່ຈະປະກອບວິຊາຊີບປິ່ນປົວ;
5) ຮູ້ເວົ້າ ແລະ ເຂົ້າໃຈພາສາລາວ, ຖ້າຮູ້ແຕ່ພາສາຕ່າງປະເທດ ໃຫ້ມີຜູ້ປະກອບວິຊາຊີບປິ່ນປົວສາຂາວິຊາຊີບດຽວກັນ (Homologue) ທີ່ຮູ້ພາສາລາວ ເປັນຜູ້ແປພາສາ;
6) ມີ ວິຊາ (Visa) ອະນຸຍາດໃຫ້ເຮັດວຽກ, ຫ້າມນຳໃຊ້ ວິຊາ ທ່ອງທ່ຽວ;
7) ໃຫ້ມີປະກັນໄພຄຸ້ມຄອງຜູ້ມາໃຊ້ບໍລິການ ກ່ຽວກັບ ການປະຕິບັດໜ້າທີ່ ທີ່ຜິດພາດທາງດ້ານວິຊາການ (Malpractice Insurance);

9.3. ຂັ້ນຕອນການຍື່ນເອກະສານ ແມ່ນ ໃຫ້ຍື່ນເອກະສານທີ່ປະກອບຄົບຖ້ວນຕາມທີ່ລະບຸໄວ້ໃນເອກະສານຊ້ອນທ້າຍ 2, ແລ້ວສົ່ງໃຫ້ຫ້ອງການ ສວປ ໂດຍກົງ ຫຼື ສົ່ງເອກະສານ ຜ່ານສະຖານທີ່ບໍລິການປິ່ນປົວບ່ອນທີ່ຕົນເອງຈະໄປສັງກັດ ແລ້ວສົ່ງໃຫ້ຫ້ອງການ ສວປ;

9.4. ສະພາຄຸ້ມຄອງວິຊາຊີບປິ່ນປົວ ຂອງ ສປປ ລາວ ຈະສຶກສາ, ຄົ້ນຄວ້າເອກກະສານ ແລະ ພິຈາລະນາ ໃຫ້ຄຳຕອບ ພາຍໃນເວລາ 8 ອາທິດ;

9.5. ຜູ້ປະກອບວິຊາຊີບປິ່ນປົວຈາກຕ່າງປະເທດ ທີ່ມີຈຸດປະສົງເຂົ້າມາຊ່ວຍເຫຼືອ ດ້ານວິຊາການ, ດ້ານມະນຸດສະທຳ ຫຼື ເປັນອາສາສະໝັກຊ່ວຍເຫຼືອລ້າໃນນາມໂຄງການ ທັງພາກລັດ ແລະ ເອກະຊົນ, ການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງສະເໜີຂໍຂຶ້ນທະບຽນເປັນຜູ້ປະກອບວິຊາຊີບປິ່ນປົວ ແລະ ຈະໄດ້ຮັບໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວຊົ່ວຄາວ, ບໍ່ມີການສອບເສັງ ແລະ ອະນຸຍາດໃຫ້ເຄື່ອນໄຫວວິຊາຊີບປິ່ນປົວຕາມເວລາທີ່ກຳນົດໄວ້;

9.6. ຜູ້ປະກອບວິຊາຊີບປິ່ນປົວທີ່ມີຈຸດປະສົງມາເຄື່ອນໄຫວວິຊາຊີບປິ່ນປົວແບບສ່ວນຕົວ ຢູ່ ສປປ ລາວ, ຕ້ອງປະຕິບັດຕາມເງື່ອນໄຂ ແລະ ຂັ້ນຕອນໃນ ຂໍ້ 9.2 ແລະ 9.3 ຂອງບົດແນະນຳສະບັບນີ້ ແລ້ວຕ້ອງໄດ້ສອບເສັງຕາມທີ່ ສະພາຄຸ້ມຄອງວິຊາຊີບປິ່ນປົວ ຂອງ ສປປ ລາວ ກຳນົດສະເພາະ;

9.7. ການຕໍ່ອາຍຸໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ.
ຜູ້ປະກອບວິຊາຊີບປິ່ນປົວແບບສ່ວນຕົວ, ຊ່ວຍເຫຼືອດ້ານມະນຸດສະທຳ ຫຼື ເປັນອາສາສະໝັກຊ່ວຍເຫຼືອລ້າຕ້ອງການຕໍ່ອາຍຸໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວຊົ່ວຄາວ ຢູ່ ສປປ ລາວ ສາມາດຕໍ່ອາຍຸໄດ້ຫຼາຍຄັ້ງ, ແຕ່ຕ້ອງປະກອບເອກະສານ ຕາມເອກະສານຊ້ອນທ້າຍ 3;

9.8. ຂັ້ນຕອນການພິຈາລະນາ ອະນຸມັດ ການຕໍ່ອາຍຸໃບອະນຸຍາດ ຈະໃຊ້ເວລາຊ້າສຸດບໍ່ເກີນ 15 ວັນ.
ຖ້າວ່າບົດລາຍງານປະເມີນຜົນການເຄື່ອນໄຫວວິຊາຊີບປິ່ນປົວໃນໄລຍະຜ່ານມາ ຫາກຂັດຕໍ່ຈັນຍາບັນ, ຂອບເຂດ ແລະ ມາດຕະຖານການປິ່ນປົວ ຂອງວິຊາຊີບການປິ່ນປົວ, ສວປ ຈະບໍ່ພິຈາລະນາຕໍ່ອາຍຸໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວໃຫ້.

9.9. ກໍລະນີເກີດໄພພິບັດສຸກເສີນ ທີມງານອາສາສະໝັກທີ່ເປັນຜູ້ປະກອບວິຊາຊີບປິ່ນປົວຄົນຕ່າງປະເທດທີ່ມີຈຸດປະສົງ ຢາກເຂົ້າມາຊ່ວຍເຫຼືອດ້ານມະນຸດສະທຳ ໃນໄລຍະເກີດໄພພິບັດສຸກເສີນ ແມ່ນໃຫ້ມີໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ຂອງ ປະເທດຕົນ ທີ່ຍັງມີອາຍຸໃຊ້ການໄດ້ ແລະ ໃຫ້ແຈ້ງເຈດຈຳນົງ ຕໍ່ກະຊວງການຕ່າງປະເທດ ຫຼື ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ ແລະ ຕ້ອງປະສານສົມທົບກັບຫ້ອງການກະຊວງສາທາລະນະສຸກ, ສະພາຄຸ້ມຄອງວິຊາຊີບປິ່ນປົວ ແລະ ພາກສ່ວນກ່ຽວຂ້ອງເພື່ອອຳນວຍຄວາມສະດວກ ຕາມຂັ້ນຕອນ ແລະ ລະບຽບການ.

## 10. ໜ້າທີ່ ແລະ ພັນທະຂອງຜູ້ປະກອບວິຊາຊີບປິ່ນປົວທີ່ໄດ້ຂຶ້ນທະບຽນ

ຜູ້ປະກອບວິຊາຊີບປິ່ນປົວ ທີ່ໄດ້ຮັບການຂຶ້ນທະບຽນ, ຖືວ່າເປັນສະມາຊິກຄະນະກຳມະການວິຊາຊີບປິ່ນປົວ ຂອງ ສວປ ກະຊວງສາທາລະນະສຸກ, ຕ້ອງໄດ້ມີສະຕິ ແລະ ຄວາມຮັບຜິດຊອບຕໍ່ການປະຕິບັດວຽກງານປິ່ນປົວ ຕາມຈັນຍາບັນ, ຈັນຍາທຳ, ຂອບເຂດ ແລະ ມາດຕະຖານການປະຕິບັດການປິ່ນປົວແບບມືອາຊີບ, ເຂົ້າຮ່ວມການພັດທະນາວິຊາຊີບຕໍ່ເນື່ອງ ແລະ ເຊີດຊູຄວາມເປັນເຈົ້າການ, ປົກປ້ອງກຽດສັກສີ ຂອງ ສວປ, ເປັນຕົວແບບດ້ານການປະກອບວິຊາຊີບ. ນອກຈາກນີ້ ຍັງຕ້ອງປະຕິບັດພັນທະອາກອນຕາມລະບຽບການ, ເຄົາລົບ ແລະ ປະຕິບັດລະບຽບກົດໝາຍ, ວັດທະນະທຳ ແລະ ຮີດຄອງປະເພນີ ຂອງ ສປປ ລາວ.

## 11. ຂໍ້ຫ້າມສຳລັບຜູ້ປະກອບວິຊາຊີບປິ່ນປົວ

ຫ້າມ ຜູ້ປະກອບວິຊາຊີບປິ່ນປົວ ໃຫ້ຜູ້ອື່ນນຳໃຊ້ ຫຼື ເຊົ່າ ໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວຂອງຕົນ, ເນື່ອງຈາກວ່າ ໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວດັ່ງກ່າວ ແມ່ນເອກະສານສິດສ່ວນບຸກຄົນ ແລະ

ກ່ຽວຂ້ອງກັບຄວາມປອດໄພຕໍ່ຊີວິດຂອງຜູ້ມາໃຊ້ບໍລິການປິ່ນປົວ. ຂໍ້ຫ້າມອື່ນໃຫ້ປະຕິບັດຕາມຂໍ້ຫ້າມຂອງກົດໝາຍວ່າດ້ວຍການປິ່ນປົວ (ສະບັບປັບປຸງ) ເລກທີ 58/ສພຊ, ລົງວັນທີ 24 ທັນວາ 2014 ໃນໝວດທີ 5 ມາດຕາ 43-50.

## 12. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ບົດແນະນຳສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ໂຈະ ຫຼື ຖອນໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ, ຖືກປັບໃໝ, ໃຊ້ແທນທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ, ລາຍລະອຽດຈະມີລະບຽບການສະເພາະ.

## 13. ການຈັດຕັ້ງປະຕິບັດ

ໃຫ້ ສວປ, ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ, ຄະນະກຳມະການວິຊາຊີບປິ່ນປົວການແພດ, ທັນຕະແພດ ແລະ ພະຍາບານ-ຜະດຸງຄັນ ຂອງ ສວປ, ຫ້ອງການກະຊວງສາທາລະນະສຸກ, ກົມຈັດຕັ້ງ ແລະ ພະນັກງານ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມການສຶກສາ ສາທາລະນະສຸກ, ມະຫາວິທະຍາໄລວິທະຍາສາດ ສຸຂະພາບ, ບັນດາກົມກອງອື່ນທີ່ກ່ຽວຂ້ອງ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ, ຫ້ອງການສາທາລະນະສຸກເມືອງ, ສະຖາບການສຶກສາ ສາທາລະນະສຸກແຂວງ, ໂຮງໝໍ, ສູນ, ສະຖາບັນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດບົດແນະນຳສະບັບນີ້ຕາມໜ້າທີ່ຂອງໃຜລາວ.

## 14. ຜົນສັກສິດ

ບົດແນະນຳສະບັບນີ້ ມີຜົນສັກສິດພາຍຫຼັງ 90 ວັນ ນັບແຕ່ວັນທີ ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວລົງລາຍເຊັນເປັນຕົ້ນໄປ, ຂໍ້ກຳນົດ ກົດລະບຽບໃດທີ່ຂັດກັບບົດແນະນຳສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

**ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ**

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບປິ່ນປົວ

ດຣ ປອນເມກ ດາລາລອຍ

## ເອກະສານຊ້ອນທ້າຍ 1 : ບັນຊີເອກະສານ ທີ່ຈະປະກອບ ສຳລັບຄົນລາວ

| | | |
|---|---|---|
| 1. | ຄຳຮ້ອງ | 01 ສະບັບ (ມີຮ່າງໃຫ້) |
| 2. | ຊີວະປະຫວັດຫຍໍ້ | 01 ສະບັບ (ມີຮ່າງໃຫ້) |
| 3. | ສຳເນົາ ປະກາສະນິຍະບັດການສຶກສາ ວິຊາຊີບປິ່ນປົວ ທຸກລະດັບ | 01 ສະບັບ |
| 4. | ໃບຢັ້ງຢືນທີ່ຢູ່ປະຈຸບັນ | 01 ສະບັບ |
| 5. | ໃບຢັ້ງຢືນສຸຂະພາບ (ບໍ່ເກີນ 3 ເດືອນ) | 01 ສະບັບ |
| 6. | ສຳເນົາບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ | 01 ສະບັບ |
| 7. | ສຳເນົາບັດພະນັກງານບຳນານ ຫຼື ໃບອະນຸຍາດຮັບບຳເນັດ | 01 ສະບັບ |
| 8. | ຮູບຂະໜາດ 3 x 4 (ພື້ນສີຂາວ ຖ່າຍບໍ່ເກີນ 6 ເດືອນ) | 04 ໃບ |

## ເອກະສານຊ້ອນທ້າຍ 2 : ບັນຊີເອກະສານ ທີ່ຈະປະກອບ ສຳລັບ ຄົນຕ່າງປະເທດ

| | | |
|---|---|---|
| 1. | ຄຳຮ້ອງ | 01 ສະບັບ |
| 2. | ຊີວະປະຫວັດຫຍໍ້ | 01 ສະບັບ |
| 3. | ສຳເນົາປະກາສະນິຍະບັດຢັ້ງຢືນວຸດທິການສຶກສາ | 01 ສະບັບ |
| 4. | ສຳເນົາໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ຈາກປະເທດຕົ້ນທາງ | 01 ສະບັບ |
| 5. | ສຳເນົາໜັງສືຜ່ານແດນ ພ້ອມ ວີຊາ | 01 ສະບັບ |
| 6. | ໃບຢັ້ງຢືນສຸຂະພາບ ຈາກປະເທດຕົ້ນທາງ | 01 ສະບັບ |
| 7. | ໃບຢັ້ງຢືນປະສົບການເຮັດວຽກການປິ່ນປົວຈາກປະເທດຕົ້ນທາງ | 01 ສະບັບ |
| 8. | ໃບຢັ້ງຢືນຈາກສະຖານທີ່ບໍລິການ ທີ່ຈະມາເຮັດວຽກ | 01 ສະບັບ |
| 9. | ໃບຢັ້ງຢືນຮັບປະກັນຈາກ ບຸກຄົນ ຫຼື ອົງການຈັດຕັ້ງ | 01 ສະບັບ |
| 10. | ໃບປະກັນໄພ Malpractice Insurance | 01 ສະບັບ |
| 11. | ໃບແຈ້ງໂທດ ຈາກປະເທດຕົ້ນທາງ | 01 ສະບັບ |
| 12. | ຮູບຂະໜາດ 3 x 4 (ຖ່າຍບໍ່ເກີນ 6 ເດືອນ) | 04 ໃບ |

ສຳເນົາເອກກະສານຕ່າງໆ ຕ້ອງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຕາມສະບັບເດີມ ຈາກສະຖາບັນ/ອົງການ ທີ່ມີສິດອຳນາດຕາມກົດໝາຍ.

## ເອກະສານຊ້ອນທ້າຍ 3: ບັນຊີເອກະສານ ທີ່ຈະປະກອບ ສຳລັບຕໍ່ອາຍຸໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ຄົນຕ່າງປະເທດ

1. ໜັງສືສະເໜີຈາກສະຖານທີ່ບໍລິການປິ່ນປົວບ່ອນທີ່ຕົນເຄື່ອນໄຫວປະຈຸບັນ;
2. ສຳເນົາໜັງສືຜ່ານແດນ ພ້ອມ ວິຊາ ;
3. ສຳເນົາບັດອະນຸຍາດພັກເຊົາຊົ່ວຄາວ ຫຼື ໃບຢັ້ງຢືນບ່ອນພັກເຊົາ ຢູ່ ສປປ ລາວ;
4. ສຳເນົາໃບອະນຸຍາດປະຕິບັດງານຢູ່ ສປປ ລາວ ສະບັບກ່ອນ;
5. ສຳເນົາໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວຊົ່ວຄາວ ສະບັບກ່ອນ;
6. ບົດລາຍງານການປະເມີນຜົນການເຄື່ອນໄຫວວິຊາຊີບປິ່ນປົວໄລຍະຜ່ານມາ ຕາມແບບຟອມຂອງ ສວປ ແລະ ເຊັນຮັບຮອງໂດຍສະຖານທີ່ບໍລິການປິ່ນປົວ ທີ່ຕົນເຄື່ອນໄຫວປະຈຸບັນ;
7. ສຳເນົາໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວຈາກປະເທດຕົ້ນທາງມີອາຍຸການນຳໃຊ້ 6 ເດືອນຂຶ້ນໄປ.

## ເອກະສານຊ້ອນທ້າຍ 4: ຂໍ້ແນະນຳ ກວດກາບັນຊີເອກະສານ ສຳລັບຄະນະກຳມະການສະເພາະກິດຂອງສະຖານທີ່ບໍລິການປິ່ນປົວ

1. ກວດເບິ່ງ ບັນຊີເອກະສານ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມເອກະສານຊ້ອນທ້າຍ 1;
2. ສົມທຽບໜ້າວຽກຕົວຈິງໃສ່ກັບວຸດທິການສຶກສາໃຫ້ກົງກັນ;
3. ມີຄວາມຮັບຜິດຊອບ ແລະ ຫ້າວຫັນໃນການປະຕິບັດວຽກງານ;
4. ບໍ່ມີຂໍ້ຜິດພາດທາງດ້ານວິຊາການ;
5. ບໍ່ມີຂໍ້ຜິດພາດທາງດ້ານຈັນຍາບັນ/ຈັນຍາທຳ;
6. ເຄົາລົບ, ນັບຖື ກົດລະບຽບລັດຖະກອນ.